ເລກທີ 098 /ບທວລ
ນະຄອນຫຼວງວຽງຈັນ, ວັນທີ 09 MAY 2025

ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2024
ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ

ປະຊຸມເມື່ອວັນທີ 29/04/2025 ເວລາ 09:00 - 11:00 ໂມງ ທີ່ຫ້ອງປະຊຸມຊັ້ນ 04 ສຳນັກງານໃຫຍ່ຂອງບໍລິສັດ ລັດວິສາຫະກິດ ພັດທະນາກະສິກຳອຸດສາຫະກຳບໍລິການ ແລະການຄ້າຂາອອກ-ຂາເຂົ້າ. ປະທານກອງປະຊຸມໂດຍທ່ານ ເນ້ຍ ເຫຼຍ ປະທານສະພາບໍລິຫານຂອງກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ ເຊິ່ງມີຜູ້ເຂົ້າຮ່ວມກອງປະຊຸມຕົວຈິງ 23 ທ່ານ, ໃນນັ້ນມີຜູ້ຖືຮຸ້ນເຂົ້າຮ່ວມກອງປະຊຸມ 10 ທ່ານ ແລະ ມອບສັນທະ 13 ທ່ານ, ມີຮຸ້ນລວມກັນທັງໝົດ 35.601.300 ຮຸ້ນ ເທົ່າກັບ 89% ຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດຂອງບໍລິສັດ, ຖືວ່າຄົບອົງປະຊຸມຕາມກົດໝາຍ ແລະ ກົດລະບຽບ *ຂອງບໍລິສັດ.*

ປະທານກອງປະຊຸມໄດ້ກ່າວຕ້ອນຮັບແຂກ ແລະ ແນະນຳຜູ້ເຂົ້າຮ່ວມປະຊຸມ ດັ່ງນີ້:

1. ທ່ານ ເນ້ຍ ເຫຼຍ ປະທານສະພາບໍລິຫານ ທັງເປັນຜູ້ອຳນວຍການໃຫ່ຍ ບໍລິສັດ LCTC
2. ທ່ານ ທອງປົນ ກິ່ງຄຳພັດ ຮອງຜູ້ອຳນວຍການໃຫຍ່ ລັດວິສາຫະກິດ ພກອ
3. ທ່ານ ຕິ໋ງ ຢູ້ຕິ໋ງ ກຳມະການສະພາບໍລິຫານ ທັງເປັນຜູ້ອຳນວຍການໃຫຍ່ ບໍລິສັດ LCTC
4. ທ່ານ ຈ່າງ ຈິ໋ງຫົວ ກຳມະການສະພາບໍລິຫານ ທັງເປັນຫົວໜ້າຝ່າຍການເງິນ ບໍລິສັດ LCTC
5. ທ່ານ ຫວັ໋ງ ຫຸ່່ຍ ກຳມະການສະພາບໍລິຫານ ທັງເປັນນັກວິສະວະກອນໃຫຍ່ ບໍລິສັດ LCTC
6. ທ່ານ ສົມທະນຸ ສົມຟອງບຸດຕະຂັນ ກຳມະການສະພາບໍລິຫານ ທັງເປັນຮອງຜູ້ອຳນວຍການໃຫຍ່ ບໍລິສັດ LCTC
7. ທ່ານ ວິຄຳແດງ ອິນທະໄຊ ກຳມະການສະພາບໍລິຫານ ອິດສະຫຼະ ບໍລິສັດ LCTC ທັງເປັນຮອງຫົວໜ້າພະແນກການເງິນ-ການບັນຊີ DAI
8. ທ່ານ ນາງ ວັນນະພອນ ສຸນັນທາ ພະແນກຄຸ້ມຄອງການອອກຈຳໜ່າຍຫຼັກຊັບ, ສຄຄຊ
9. ທ່ານ ນາງ ວັ໋ງອຸໄທ ມູລຣັຕນ ພະແນກຄຸ້ມຄອງການອອກຈຳໜ່າຍຫຼັກຊັບ, ສຄຄຊ
10. ທ່ານ ອັດສະວິນ ຂັນທະວົງ ວິຊາການ ພະແນກຈົດທະບຽນ ແລະ ເປີດເຜີຍຂໍ້ມູນ ຕລຊລ
11. ທ່ານ ນາງ ຄຳມີ ພົມສີຄຳລາ ຕາງໜ້າຜູ້ຖືຮຸ້ນລາຍຍ່ອຍ

ຫຼັງຈາກນັ້ນ, ປະທານກອງປະຊຸມໄດ້ເລີ່ມເຂົ້າສູ່ແຕ່ລະວາລະຢ່າງເປັນທັງການ ເຊິ່ງກອງປະຊຸມຄັ້ງນີ້ ມີຂໍ້ສະເໜີພິຈາລະນາທັງໝົດ 06 ຂໍ້, ແຕ່ລະຂໍ້ໄດ້ພິຈາລະນາ, ມີຄຳເຫັນ ແລະ ລົງຄະແນນສຽງ ດັ່ງນີ້:

ວາລະທີ 01 : ພິຈາລະນາ ແລະຮັບຮອງ ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2023 ຂອງ ບໍລິສັດ.

ທ່ານ ເນ້ຍ ເຫຼຍ ປະທານສະພາບໍລິຫານ ທັງເປັນຜູ້ອຳນວຍການໃຫ່ຍ ບໍລິສັດ LCTC ໄດ້ລາຍງານ ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2023 ຂອງ ບໍລິສັດ ຊີມັງລາວ ມະຫາຊົນ ຕໍ່ກອງປະຊຸມ ເຊິ່ງມີເນື້ອໃນລະອຽດຢູ່ໃນເອກະສານຄັດຕິດ 02 ຂອງເອກະສານກ່ຽວກັບກອງປະຊຸມ.

ຈາກນັ້ນປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນປະກອບຄຳຄິດເຫັນຕໍ່ຂໍ້ສະເໜີພິຈາລະນານີ້ ເຊິ່ງບໍ່ມີຄຳເຫັນ ແລະ ຄຳຖາມໃດຈາກກອງປະຊຸມ.

ຜ່ານການພິຈາລະນາ ແລະ ການລົງຄະແນນສຽງ ກອງປະຊຸມໄດ້ມີມະຕິຮັບຮອງດ້ວຍຄະແນນສຽງ ສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- ເຫັນດີຈຳນວນ 35.601.300 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 02 : ພິຈາລະນາ ແລະຮັບຮອງ ບົດດຳເນີນທຸລະກິດ ປະຈຳປີ 2024 ຂອງ ກຸ່ມ ບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ

ທ່ານ ເນ້ຍ ເຫຼຍ ປະທານສະພາບໍລິຫານ ທັງເປັນຜູ້ອຳນວຍການໃຫ່ຍຂອງ ບໍລິສັດ LCTC ໄດ້ລາຍງານ ບົດດຳເນີນທຸລະກິດ ປະຈຳປີ 2024 ຂອງ ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ ຕໍ່ກອງປະຊຸມ ເຊິ່ງມີເນື້ອໃນລະອຽດຢູ່ໃນເອກະສານຄັດຕິດ 03 ຂອງເອກະສານກ່ຽວກັບກອງປະຊຸມ.

ຈາກນັ້ນປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນປະກອບຄຳຄິດເຫັນຕໍ່ຂໍ້ສະເໜີພິຈາລະນານີ້ ເຊິ່ງບໍ່ມີຄຳເຫັນ ແລະ ຄຳຖາມໃດຈາກກອງປະຊຸມ.

ທ່ານ ກຽດສຸວັນ ບຸນວິໄລ ຕາງໜ້າ ບໍລິສັດ ຫຼັກຊັບລາວ ຈີນ ໄດ້ປະກອບຄຳເຫັນ ຄື :

ການດຳເນີນທຸລະກິດຂອງກຸ່ມບໍລິສັດ ເປັນຫຍັງຄືມີຫຼາຍທຸລະກິດແທ້.

ຈາກນັ້ນ ທ່ານ ເນ້ຍເຫຼຍ ປະທານສະພາບໍລິຫານ ໄດ້ຊີ້ແຈ້ງຕໍ່ບັນຫາດັ່ງກ່າວວ່າ ເປັນແຜນການຂອງ ບໍລິສັດ ແລະການເຮັດຫຼາຍກິດຈະການແມ່ນເພື່ອຈະສ້າງລາຍຮັບອີກຫຼາຍຊ່ອງທາງໃຫ້ກັບບໍລິສັດ.

ຜ່ານການພິຈາລະນາ ແລະ ການລົງຄະແນນສຽງ ກອງປະຊຸມໄດ້ມີມະຕິຮັບຮອງດ້ວຍຄະແນນສຽງ ສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- ເຫັນດີຈຳນວນ 35.601.300 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 03 : ພິຈາລະນາ ແລະຮັບຮອງ ບົດລາຍງານອຽກງານການເງິນປະຈຳປີ 2024 ຂອງ ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ

ທ່ານ ຈ່າງ ຈິ່ງຫົວ ກຳມະການສະພາບໍລິຫານ ທັງເປັນຫົວໜ້າຝ່າຍການເງິນຂອງ ບໍລິສັດ LCTC ໄດ້ລາຍບົດລາຍງານອຽກງານການເງິນປະຈຳປີ 2024 ຂອງກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ ຕໍ່ກອງປະຊຸມ ເຊິ່ງມີເນື້ອໃນລະອຽດຢູ່ໃນເອກະສານຄັດຕິດ 04 ຂອງເອກະສານກ່ຽວກັບກອງ

ປະຊຸມ.

ຈາກນັ້ນປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນປະກອບຄຳຄິດເຫັນຕໍ່ຂໍ້ສະເໜີພິຈາລະນານີ້ ເຊິ່ງບໍ່ມີຄຳເຫັນ ແລະ ຄຳຖາມໃດຈາກກອງປະຊຸມ.

ຜ່ານການພິຈາລະນາ ແລະ ການລົງຄະແນນສຽງ ກອງປະຊຸມໄດ້ມີມະຕິຮັບຮອງດ້ວຍຄະແນນສຽງ ສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- ເຫັນດີຈຳນວນ 35.601.300 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 04 : ພິຈາລະນາ ແລະຮັບຮອງ ກ່ຽວກັບການວ່າຈ້າງຜູ້ອຳນວຍການໃຫຍ່ ແລະ ການປ່ຽນແປງສະມາຊິກສະພາບໍລິຫານຂອງບໍລິສັດ

ທ່ານ ເນ້ຍ ເຫຼຍ ປະທານສະພາບໍລິຫານ ທັງເປັນຜູ້ອຳນວຍການໃຫ່ຍຂອງ ບໍລິສັດ LCTC ໄດ້ລາຍງານກ່ຽວກັບການວ່າຈ້າງຜູ້ອຳນວຍການໃຫຍ່ ແລະ ການປ່ຽນແປງສະມາຊິກສະພາບໍລິຫານຂອງບໍລິສັດ ຕໍ່ກອງປະຊຸມ ເຊິ່ງມີເນື້ອໃນລະອຽດຢູ່ໃນເອກະສານຄັດຕິດ 05 ຂອງເອກະສານກ່ຽວກັບກອງປະຊຸມ.

ຈາກນັ້ນປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນປະກອບຄຳຄິດເຫັນຕໍ່ຂໍ້ສະເໜີພິຈາລະນານີ້ ເຊິ່ງບໍ່ມີຄຳເຫັນ ແລະ ຄຳຖາມໃດຈາກກອງປະຊຸມ.

ຜ່ານການພິຈາລະນາ ແລະ ການລົງຄະແນນສຽງ ກອງປະຊຸມໄດ້ມີມະຕິຮັບຮອງດ້ວຍຄະແນນສຽງ ສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- ເຫັນດີຈຳນວນ 35.601.300 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 05 : ພິຈາລະນາ ແລະຮັບຮອງກ່ຽວກັບການຊື້ຮຸ້ນຂອງບໍລິສັດ ຟາສະຕາ ໂຕແບກ ໂຄ ການຄ້າ ຈຳກັດ

ທ່ານ ເນ້ຍ ເຫຼຍ ປະທານສະພາບໍລິຫານ ທັງເປັນຜູ້ອຳນວຍການໃຫ່ຍຂອງ ບໍລິສັດ LCTC ໄດ້ລາຍງານກ່ຽວກັບການຊື້ຮຸ້ນຂອງບໍລິສັດ ຟາສະຕາ ໂຕແບກໂຄ ການຄ້າ ຈຳກັດ ຕໍ່ກອງປະຊຸມ ເຊິ່ງມີເນື້ອໃນລະອຽດຢູ່ໃນເອກະສານຄັດຕິດ 06 ຂອງເອກະສານກ່ຽວກັບກອງປະຊຸມ.

ຈາກນັ້ນປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນປະກອບຄຳຄິດເຫັນຕໍ່ຂໍ້ສະເໜີພິຈາລະນານີ້ ເຊິ່ງບໍ່ມີຄຳເຫັນ ແລະ ຄຳຖາມໃດຈາກກອງປະຊຸມ.

ຜ່ານການພິຈາລະນາ ແລະ ການລົງຄະແນນສຽງ ກອງປະຊຸມໄດ້ມີມະຕິຮັບຮອງດ້ວຍຄະແນນສຽງ ສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- ເຫັນດີຈຳນວນ 35.601.300 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 06 : ພິຈາລະນາ ແລະຮັບຮອງກ່ຽວກັບການຂຶ້ນທະບຽນບັນດາບໍລິສັດລູກ

ທ່ານ ເນ້ຍເຫຼຍ ປະທານສະພາບໍລິຫານ ທັງເປັນຜູ້ອຳນວຍການໃຫ່ຍຂອງ ບໍລິສັດ LCTC ໄດ້ລາຍ

ຕິດ 07 ຂອງເອກະສານກ່ຽວກັບກອງປະຊຸມ.

ຈາກນັ້ນປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນປະກອບຄຳຄິດເຫັນຕໍ່ຂໍ້ສະເໜີພິຈາລະນານີ້ ເຊິ່ງບໍ່ມີຄຳເຫັນ ແລະ ຄຳຖາມໃດຈາກກອງປະຊຸມ.

ຜ່ານການພິຈາລະນາ ແລະ ການລົງຄະແນນສຽງ ກອງປະຊຸມໄດ້ມີມະຕິຮັບຮອງດ້ວຍຄະແນນສຽງ ສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- ເຫັນດີຈຳນວນ 35.601.300 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ຈາກນັ້ນ, ທ່ານ ສົມທະນູ ສົມພອງບຸດຕະຂັນ ຜູ້ຄວບຄຸມຄະແນນສຽງ ໄດ້ນັບກວດຜົນການລົງຄະແນນສຽງ ແລະ ແຈ້ງຜົນການລົງຄະແນນສຽງຂອງແຕ່ລະຂໍ້ພິຈາລະນາຕໍ່ກອງປະຊຸມ.

ສຸດທ້າຍ, ປະທານກອງປະຊຸມໄດ້ປະກາດວ່າ ຂໍ້ສະເໜີພິຈາລະນາທັງໝົດ 06 ຂໍ້ໃນກອງປະຊຸມຄັ້ງນີ້ແມ່ນຜ່ານໄປດ້ວຍຜົນສຳເລັດອັນຈົບງາມ, ພ້ອມກັນນັ້ນ, ໄດ້ກ່າວປິດກອງປະຊຸມໃນເວລາ 11:00 ໂມງ ຂອງວັນດຽວກັນ.

ປະທານກອງປະຊຸມ

ເນ້ຍເຫຼ້ຍ

ຜູ້ບັນທຶກ